ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

2923

ເລກທີ /ສສກ

ນະຄອນຫຼວງວຽງຈັນ, ວັນທີ 13 ກໍລະກົດ 2020

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 253/ນຍ, ລົງວັນທີ 26 ພຶດສະພາ 2020;
- ອີງຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

## ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ, ແຜນພັດທະນາວຽກງານນິຕິກຳ, ປະກັນຄຸນນະພາບການສຶກສາ ແລະ ຂອບວຸດທິການສຶກສາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ຂຽນເປັນຕົວອັກສອນຫຍໍ້ວ່າ "ນປຄ" ເປັນກົງຈັກບໍລິຫານ ແລະ ວິຊາການ ໃນໂຄງປະກອບກົງຈັກການຈັດຕັ້ງ ຂອງກະຊວງສຶກສາທິການ ແລະ ກິລາ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະມົນຕີ ກ່ຽວກັບ ການຄຸ້ມຄອງ ແລະ ພັດທະນາວຽກງານ ນິຕິກຳ, ປະກັນຄຸນນະພາບການສຶກສາ ແລະ ຂອບວຸດທິການສຶກສາແຫ່ງຊາດ.

# ໝວດທີ 2

## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ, ທິດທາງແຜນການ ແລະ ຍຸດທະສາດຂອງກະຊວງສຶກສາທິການ ແລະ ກິລາ ເພື່ອສ້າງເປັນແຜນພັດທະນາວຽກງານຂອງຕົນ;
2. ຄົ້ນຄວ້າ ແລະ ສັງລວມແຜນການສ້າງ ແລະ ປັບປຸງ ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງຂະແໜງການສຶກສາທິການ ແລະ ກິລາ ໃນແຕ່ລະໄລຍະ;
3. ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳ ເພື່ອຄຸ້ມຄອງບໍລິຫານວຽກງານນິຕິກຳ, ປະກັນຄຸນນະພາບການສຶກສາ ແລະ ຂອບວຸດທິການສຶກສາແຫ່ງຊາດ;
4. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ກວດກາຄວາມສອດຄ່ອງ ຕໍ່ຮ່າງກົດໝາຍ, ນິຕິກຳໃຕ້ກົດໝາຍ ຂອງຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການ ສ້າງ ແລະ ປັບປຸງ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງຂະແໜງການສຶກສາທິການ ແລະ ກິລາ;
6. ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນການສຶກສາທິການ ແລະ ກິລາ ກ່ຽວກັບວຽກງານນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
7. ທົດສອບ ແລະ ປະເມີນຜົນການຮຽນຂອງຜູ້ຮຽນ ທຸກຂັ້ນ ທຸກສາຍ ຕາມມາດຕະຖານທີ່ກຳນົດໄວ້ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການປະເມີນຄຸນນະພາບພາຍນອກ ຂອງສະຖານການສຶກສາ ແລະ ຫຼັກສູດການສຶກສາ ຕາມມາດຕະຖານທີ່ໄດ້ກຳນົດໄວ້ ເພື່ອປັບປຸງ ແລະ ຮັບຮອງຄຸນນະພາບ;
9. ຄຸ້ມຄອງຂອບວຸດທິການສຶກສາ ຂອງຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນ;
10. ປະສານງານ ແລະ ຮ່ວມມືທາງວິຊາການກັບ ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ເອກະຊົນ ພ້ອມທັງພົວພັນ ຮ່ວມມື ກັບເຄືອຂ່າຍປະກັນຄຸນນະພາບການສຶກສາ ພາກພື້ນ ແລະ ສາກົນ ຕາມການອະນຸມັດຂອງລັດຖະມົນຕີ;
11. ຈັດພິມ, ໂຄສະນາ ແລະ ເຜີຍແຜ່ ບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຜົນການປະເມີນການປະກັນຄຸນນະພາບການສຶກສາ;
12. ສ້າງ ແລະ ພັດທະນາຖານຂໍ້ມູນກ່ຽວກັບວຽກງານ ນິຕິກຳ, ປະກັນຄຸນນະພາບການສຶກສາ ແລະ ຂອບວຸດທິການສຶກສາ;
13. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຂັ້ນເທິງ ເປັນປົກກະຕິ;
14. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີ.

**ມາດຕາ 4 ຂອບເຂດສິດ**

ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ມີຂອບເຂດສິດ ດັ່ງນີ້ :

1. ສະເໜີແຜນການ ແລະ ແຜນງົບປະມານ ເພື່ອພັດທະນາວຽກງານທີ່ກົມ ຮັບຜິດຊອບຕໍ່ລັດຖະມົນຕີ;
2. ສະເໜີລັດຖະມົນຕີ ພິຈາລະນາ ອະນຸມັດ, ປັບປຸງ, ລົບລ້າງ ຫຼື ຍົກເລີກ ບັນດານິຕິກຳຄຸ້ມຄອງການສຶກສາ ແລະ ກິລາ ທີ່ບໍ່ສອດຄ່ອງ;
3. ສະເໜີ ລັດຖະມົນຕີ ພິຈາລະນາ ອະນຸມັດ, ສ້າງຕັ້ງ ຫຼື ຍົກເລີກ ພະແນກຕ່າງໆ ທີ່ຂຶ້ນກັບການຄຸ້ມຄອງຂອງກົມ;
4. ສະເໜີ ລັດຖະມົນຕີ ພິຈາລະນາ ການບັນຈຸ, ສັບຊ້ອນ, ຍົກຍ້າຍ, ແຕ່ງຕັ້ງ ແລະ ປົດຕຳແໜ່ງ ພະນັກງານ-ລັດຖະກອນ ພາຍໃນກົມ ຕາມກົດໝາຍ ແລະ ລະບຽບການ;
5. ສະເໜີການປະຕິບັດນະໂຍບາຍຕ່າງໆ ຕໍ່ຜູ້ມີຜົນງານ ແລະ ປະຕິບັດວິໄນພະນັກງານ-ລັດຖະກອນ ພາຍໃນກົມ ຕາມກົດໝາຍ ແລະ ລະບຽບການ;
6. ຄຸ້ມຄອງ ແລະ ນຳໃຊ້ ງົບປະມານ, ວັດຖຸ, ຊັບສິນ, ກອງທຶນ ແລະ ທຶນຊ່ວຍເຫຼືອ ປະເພດຕ່າງໆ ຕາມການອະນຸມັດຂອງລັດຖະມົນຕີ;
7. ຮຽກໂຮມປະຊຸມ, ປຶກສາຫາລື ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ຕາມພາລະບົດບາດຂອງຕົນ;
8. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການອະນຸມັດຂອງລັດຖະມົນຕີ;
9. ສະເໜີລັດຖະມົນຕີ ປົກປ້ອງ, ຄຸ້ມຄອງບຸກຄະລາກອນ, ຊັບສິນ, ລິຂະສິດ ທາງດ້ານການສຶກສາ ແລະ ກິລາ;
10. ປະຕິບັດສິດອື່ນ ຕາມການມອບໝາຍຂອງລັດຖະມົນຕີ.

## ໝວດທີ 3

## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງ ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ປະກອບມີ 5 ພະແນກຄື:

1. ພະແນກ ບໍລິຫານ;
2. ພະແນກ ພັດທະນານິຕິກຳ;
3. ພະແນກ ປະກັນຄຸນນະພາບການສຶກສາ;
4. ພະແນກ ຄຸ້ມຄອງຂອບວຸດທິການສຶກສາ;
5. ພະແນກ ໂຄສະນາເຜີຍແຜ່, ຕິດຕາມ ແລະ ປະເມີນຜົນ.

**ມາດຕາ 6 ໂຄງປະກອບບຸກຄະລະກອນ ແລະ ຕຳແໜ່ງງານ**

ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ມີບຸກຄະລາກອນຈຳນວນ 39 ຕຳແໜ່ງ ຊຶ່ງມີລາຍລະອຽດດັ່ງນີ້:

1. ຫົວໜ້າກົມ 1 ຕຳແໜ່ງ
2. ຮອງຫົວໜ້າກົມ 3 ຕຳແໜ່ງ;
3. ຫົວໜ້າພະແນກ 5 ຕຳແໜ່ງ;
4. ຮອງຫົວໜ້າພະແນກ 7 ຕຳແໜ່ງ;
5. ພະນັກງານວິຊາການທັງໝົດຈຳນວນ 23 ຕຳແໜ່ງ:
    - ພະແນກ ບໍລິຫານ 4 ຕຳແໜ່ງ;
    - ພະແນກ ພັດທະນານິຕິກຳ 6 ຕຳແໜ່ງ;
    - ພະແນກ ປະກັນຄຸນນະພາບການສຶກສາ 5 ຕຳແໜ່ງ;
    - ພະແນກ ຄຸ້ມຄອງຂອບວຸດທິການສຶກສາ 4 ຕຳແໜ່ງ;
    - ພະແນກ ໂຄສະນາເຜີຍແຜ່, ຕິດຕາມ ແລະ ປະເມີນຜົນ 4 ຕຳແໜ່ງ.

## ໝວດທີ 4
## ໜ້າທີ່ ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ ຂອງພະແນກບໍລິຫານ**

ພະແນກບໍລິຫານ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສັງລວມ ແລະ ສ້າງແຜນພັດທະນາວຽກງານພາຍໃນກົມ;
2. ເປັນເລຂານຸການ, ປະສານງານການນັດໝາຍເຊີນ ແລະ ວຽກງານພິທີການຕ່າງໆຂອງກົມ ແລະ ພົວພັນປະສານງານກັບພາກສ່ວນອື່ນ ທັງໃນ ແລະ ນອກ;
3. ຄຸ້ມຄອງ ເອກະສານ, ອັດສຳເນົາ, ສົ່ງເອກະສານ ແລະ ແຈ້ງຂ່າວພາຍໃນກົມ,
4. ຄຸ້ມຄອງ ບັນຊີ, ງົບປະມານການເງິນ, ຊັບສິນ, ພາຫະນະ, ອຸປະກອນ ແລະ ອື່ນໆ ພາຍໃນກົມ;
5. ສ້າງແຜນງົບປະມານ, ຄຸ້ມຄອງການນຳໃຊ້, ຕິດຕາມ ແລະ ສະຫຼຸບລາຍຮັບລາຍຈ່າຍຂອງກົມເປັນແຕ່ລະໄລຍະ;
6. ຄົ້ນຄວ້າ ການສ້າງຕັ້ງ ຫຼື ຍຸບເລີກ ຫົວໜ່ວຍການຈັດຕັ້ງ ຂອງກົມ;
7. ຄົ້ນຄວ້າ ການຂຽນຄູ່ມືວິທີການເຮັດວຽກ ແລະ ການກຳນົດຕຳແໜ່ງງານຂອງກົມ;
8. ຄົ້ນຄວ້າ ການປະຕິບັດນະໂຍບາຍ, ແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ບຳເນັດ, ບຳນານ, ການບໍ່ອຍູ່, ການປະຕິບັດວິໄນ ແລະ ປົດຕຳແໜ່ງ ພະນັກງານ-ລັດຖະກອນ ຕາມກົດໝາຍ ແລະ ລະບຽບການ;
9. ສະຫຼຸບ ແລະ ລາຍງານ ແຜນການເຄື່ອນໄຫວ ປະຈຳອາທິດ, ປະຈຳເດືອນ, ປະຈຳ 3 ເດືອນ, ປະຈຳ 6 ເດືອນຕົ້ນປີ, 6 ເດືອນທ້າຍປີ ແລະ ປະຈຳປີ ຂອງກົມ;
10. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນພະແນກ ໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
11. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 8 ໜ້າທີ່ ຂອງພະແນກພັດທະນານິຕິກຳ**

ພະແນກພັດທະນານິຕິກຳ ມີໜ້າທີ່ ດັ່ງນີ້:

1. ສັງລວມແຜນການສ້າງ ແລະ ປັບປຸງກົດໝາຍ, ດຳລັດ ແລະ ນິຕິກຳໃຕ້ກົດໝາຍ ຂອງຂະແໜງການສຶກສາທິການ ແລະ ກິລາ;
2. ຄົ້ນຄວ້າ ແລະ ນຳສະເໜີການສ້າງ, ປັບປຸງ, ໂຈະ ແລະ ຍົກເລີກ ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;
3. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ກວດກາຄວາມສອດຄ່ອງ ທາງດ້ານນິຕິກຳ ຕໍ່ຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມການສະເໜີຂອງຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນ;
4. ຊຸກຍູ້ ແລະ ຕິດຕາມ ການສ້າງ ແລະ ປັບປຸງ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂະແໜງການສຶກສາທິການ ແລະ ກິລາ ໃນແຕ່ລະໄລຍະ;
5. ຄົ້ນຄວ້າ ແລະ ພິຈາລະນາຮ່າງ ບົດວິພາກ ແລະ ບົດປະເມີນຜົນກະທົບ ຂອງການສ້າງ ແລະ ປັບປຸງນິຕິກຳ ຂອງຂະແໜງການສຶກສາທິການ ແລະ ກິລາ;
6. ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານນິຕິກຳ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
7. ປະສານສົມທົບກັບບັນດາ ຫ້ອງການ, ກົມ, ອົງການລັດທຽບເທົ່າກົມ, ສູນ, ສະຖານການສຶກສາ ແລະ ບັນດາກະຊວງທີ່ກ່ຽວຂ້ອງ, ໃນການສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງຂະແໜງການສຶກສາທິການ ແລະ ກິລາ;
8. ພົວພັນຮ່ວມມື ແລະ ແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບການພັດທະນາວຽກງານນິຕິກຳ ທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີຂອງຂັ້ນເທິງ;
9. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນພະແນກ ໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
10. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ໜ້າທີ່ພະແນກ ປະກັນຄຸນນະພາບການສຶກສາ**

ພະແນກປະກັນຄຸນນະພາບການສຶກສາ ມີໜ້າທີ່ດັ່ງນີ້:

1. ພັດທະນາມາດຕະຖານ, ຕົວຊີ້ວັດ, ເຄື່ອງມື, ຄູ່ມື, ເກນການປະເມີນ ແລະ ນິຕິກຳຕ່າງໆ ກ່ຽວກັບການປະກັນຄຸນນະພາບການສຶກສາກ່ອນໄວຮຽນ ແລະ ສາມັນ ທັງພາກລັດ ແລະ ເອກະຊົນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
2. ພັດທະນາມາດຕະຖານ, ຕົວຊີ້ວັດ, ເຄື່ອງມື, ຄູ່ມື, ເກນການປະເມີນ ແລະ ນິຕິກຳຕ່າງໆ ກ່ຽວກັບການປະກັນຄຸນນະພາບການສຶກສາ ສາຍອາຊີວະ ແລະ ການສຶກສາຊັ້ນສູງ ທັງພາກລັດ ແລະ ເອກະຊົນ ໃນລະດັບສະຖານການສຶກສາ ແລະ ລະດັບຫຼັກສູດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
3. ຈັດຝຶກອົບຮົມ ວຽກງານການປະກັນຄຸນນະພາບການສຶກສາ ທຸກຊັ້ນ, ທຸກສາຍ ທັງພາກລັດ ແລະ ເອກະຊົນ;
4. ຕິດຕາມ, ຊຸກຍູ້ ແລະ ສົ່ງເສີມ ການປະເມີນຄຸນນະພາບການສຶກສາພາຍໃນ ແລະ ພາຍນອກ ໃຫ້ສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງການປະເມີນຄຸນນະພາບການສຶກສາພາຍນອກໃຫ້ສະຖານການສຶກສາ;
6. ຄົ້ນຄວ້າ ແລະ ນຳສະເໜີ ຜົນການປະເມີນ ເພື່ອຮັບຮອງ ແລະ ອອກໃບຢັ້ງຢືນຄຸນນະພາບການສຶກສາ;

7. ພົວພັນ ແລະ ຮ່ວມມື ໃນການເຊື່ອມໂຍງລະບົບປະກັນຄຸນນະພາບການສຶກສາ ຂອງ ສປປ ລາວ ເຂົ້າກັບພາກພື້ນ ແລະ ສາກົນ;
8. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນພະແນກ ໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
9. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 10 ໜ້າທີ່ ຂອງພະແນກ ຄຸ້ມຄອງຂອບວຸດທິການສຶກສາ**

ພະແນກຄຸ້ມຄອງຂອບວຸດທິການສຶກສາ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍແຜນງານ ຂອງຄະນະກຳມະການຂອບວຸດທິການສຶກສາແຫ່ງຊາດ;
2. ພັດທະນາ ແລະ ປັບປຸງ ນິຕິກຳ ທີ່ກ່ຽວຂ້ອງກັບຂອບວຸດທິການສຶກສາແຫ່ງຊາດ ແລະ ການທົດສອບຜົນການຮຽນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
3. ສ້າງລະບົບກົນໄກ ກ່ຽວກັບການລະສົມ ໜ່ວຍກິດ ແລະ ການທຽບໂອນຜົນການຮຽນ;
4. ຊຸກຍູ້ ແລະ ສົ່ງເສີມ ການທົດສອບຜົນການຮຽນຂອງແຕ່ລະສາຂາວິຊາ, ຫຼັກສູດ ແລະ ລະດັບວຸດທິການສຶກສາ ໃຫ້ສາມາດເຊື່ອມໂຍງ ກັບພາກພື້ນ ແລະ ສາກົນ;
5. ປະສານສົມທົບກັບບັນດາກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາມາດຕະຖານອາຊີບ ແລະ ມາດຕະຖານສີມືແຮງງານ ໃຫ້ສອດຄ່ອງ ກັບ ຂອບວຸດທິການສຶກສາແຫ່ງຊາດ;
6. ພົວພັນ ແລະ ຮ່ວມມື ໃນການເຊື່ອມໂຍງຂອບວຸດທິການສຶກສາແຫ່ງຊາດ ກັບຂອບວຸດທິການສຶກສາຂອງພາກພື້ນ ແລະ ສາກົນ;
7. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນພະແນກ ໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
8. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 11 ໜ້າທີ່ ຂອງພະແນກໂຄສະນາເຜີຍແຜ່, ຕິດຕາມ ແລະ ປະເມີນຜົນ**

ພະແນກ ໂຄສະນາເຜີຍແຜ່, ຕິດຕາມ ແລະ ປະເມີນຜົນ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສັງລວມແຜນການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອສະເໜີລັດຖະມົນຕີພິຈາລະນາ;
2. ສຳເນົາ, ເກັບຮັກສາ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນໃນການຄົ້ນຄວ້າ;
3. ໂຄສະນາ ແລະ ເຜີຍແຜ່ ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງຂະແໜງການສຶກສາທິການ ແລະ ກິລາ ໃຫ້ສັງຄົມໄດ້ຮັບຊາບຢ່າງກວ້າງຂວາງ ແລະ ຈັດຕັ້ງປະຕິບັດຢ່າງມີຜົນສັກສິດ;
4. ສັງລວມບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ນຳໃຊ້ທົ່ວໄປຂອງຂະແໜງການສຶກສາທິການ ແລະ ກິລາ ເພື່ອສະເໜີພາກສ່ວນທີ່ກ່ຽວຂ້ອງລົງຈົດໝາຍເຫດທາງລັດຖະການ;
5. ສັງລວມບັນດານິຕິກຳ ຂອງຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອສະເໜີຈັດພິມ ແລະ ແຈກຢາຍ ພ້ອມທັງລົງເວັບໄຊຂອງກົມ ແລະ ກະຊວງສຶກສາທິການ ແລະ ກິລາ ເພື່ອໂຄສະນາເຜີຍແຜ່;
6. ສ້າງ, ປັບປຸງ ແລະ ຄຸ້ມຄອງ ລະບົບຂໍ້ມູນຂ່າວສານ ກ່ຽວກັບວຽກງານນິຕິກຳ, ປະກັນຄຸນນະພາບການສຶກສາ ແລະ ຂອບວຸດທິການສຶກສາແຫ່ງຊາດ;

7. ພົວພັນ ແລະ ຮ່ວມມື ດ້ານວິຊາການ ກ່ຽວກັບວຽກງານໃດສະນາເຜີຍແຜ່ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
8. ກວດກາ, ຕິດຕາມ ແລະ ປະເມີນຜົນ ພ້ອມທັງສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານພາຍໃນພະແນກ ໃຫ້ຄະນະກົມ ແລະ ຂັ້ນເທິງຊາບ ໃນແຕ່ລະໄລຍະ;
9. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 12 ຫຼັກການ

ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ເຄື່ອນໄຫວວຽກງານຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດ ປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວ ຂອງກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ແມ່ນອີງໃສ່ກົດໝາຍ, ລະບຽບການ, ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 13 ແບບແຜນວິທີເຮັດວຽກ

ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີ ແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ວຽກງານນິຕິກຳ, ປະກັນຄຸນນະພາບການສຶກສາ ແລະ ຂອບວຸດທິການສຶກສາແຫ່ງຊາດໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງລາຍງານສອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງ ເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 14 ງົບປະມານ ແລະ ຕາປະທັບ

ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ມີງົບປະມານຮັບໃຊ້ວຽກງານຂອງຕົນ ຊຶ່ງໄດ້ມາຈາກງົບປະມານ ຂອງກະຊວງສຶກສາທິການ ແລະ ກິລາ, ການຊ່ວຍເຫຼືອ, ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ ແລະ ມີຕາປະທັບ ເພື່ອຮັບໃຊ້ວຽກງານທາງລັດຖະການ.

**ມາດຕາ 15 ການຜັນຂະຫຍາຍ**

ມອບໃຫ້ ກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ກຳນົດໜ້າທີ່, ກິດຈະກຳລະອຽດ ແລະ ກຳນົດມາດຕະຖານແຕ່ລະຕຳແໜ່ງງານ ເພື່ອນຳສະເໜີລັດຖະມົນຕີ ບັນຈຸ ແລະ ສັບຊ້ອນ ພະນັກງານ-ລັດຖະກອນ ເຂົ້າໃສ່ຕຳແໜ່ງງານຕາມຄວາມເໝາະສົມ.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ບັນດາ ຫ້ອງການ, ກົມ, ອົງການລັດທຽບເທົ່າກົມ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນ. .

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆ ທີ່ງປະກາດໃຊ້ໃນເມື່ອກ່ອນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີ

ບ່ອນນຳສົ່ງ:

1. ກະຊວງພາຍໃນ 1 ສະບັບ;
2. ຫ້ອງການກະຊວງ 1 ສະບັບ;
3. ບັນດາກົມ, ສະຖາບັນ ແລະ ສູນ ພາກສ່ວນລະ 1 ສະບັບ;
4. ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພາກສ່ວນລະ 1 ສະບັບ;
5. ພາກສ່ວນທີ່ກ່ຽວຂ້ອງ ພາກສ່ວນລະ 1 ສະບັບ;
6. ເກັບມ້ຽນ 3 ສະບັບ.

ນ.ແສງເດືອນ ຫຼ້າຈັນທະບູນ